## ຂັ້ນຕອນຂອງການສະເໜີຂໍທຶນ

ການສະເໜີຂໍທຶນທັງຂະໜາດ ໃຫຍ່ ແລະ ນ້ອຍ ສາມາດຍື່ນຫາໜ່ວຍງານປະຕິບັດງານໂຄງການທີ່ຫ້ອງການ ກປສ ໄດ້ທຸກໆວັນລັດຖະການ.

ການສະເໜີຂໍທຶນຕ້ອງເຮັດຕາມ ແບບຟອມມາດຕະຖານແຕ່ບໍ່ກໍານົດຄວາມຍາວຂອງບົດ. ບົດສະເໜີ ຂໍທຶນຂະໜາດໃຫຍ່ຈະມີການພິຈາລະນາຈາກ ຄະນະວິຊາການກວດກາພິເສດຢ່າງໜ້ອຍສອງທ່ານ ແລະ ສະເໜີຕໍ່ຫ້ອງການ ຫລື ສະພາບໍລິຫານກອງທຶນເປັນຜູ້ຕົກລົງອະນຸມັດ.




## ກິດຈະກໍາທີ່ຈະບໍ່ໄດ້ຮັບການສະໜັບສະໜູນ

ຜູ້ຂໍທຶນຕ້ອງຮັບຮູ້ວ່າ ບາງກິດຈະກໍາຈະບໍ່ໄດ້ຮັບການສະໜັບສະໜູນດ້ານທຶນຮອນຈາກບ້ວງສະໜອງທຶນດັ່ງກ່າວ ເຊິ່ງລວມມີ:

- ☞ ກິດຈະກໍາໃດໜຶ່ງທີ່ຈໍາເປັນຕ້ອງເຮັດ ການປະເມີນຜົນດ້ານສິ່ງແວດລ້ອມແບບລະອຽດ ຕາມລະບຽບກົດໝາຍຂອງ ສປປລາວ;
- ☞ ກິດຈະກໍາທີ່ຕ້ອງເຮັດຕາມລະບຽບກົດໝາຍປະເມີນຜົນກະທົບດ້ານສິ່ງແວດລ້ອມ ເພື່ອຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການໃດໜຶ່ງ.
- ☞ ກິດຈະກໍາຕ່າງໆທີ່ມີການເວນຄືນທີ່ດິນ, ການທໍາລາຍຊັບສິນ ຫຼື ມີການຍົກຍ້າຍຈັດສັນປະຊາຊົນ;
- ☞ ການຈັດຊື້ອຸປະກອນຂະໜາດໃຫຍ່ເຊັ່ນ: ພາຫະນະ (ລົດເກງ, ລົດກະບະ, ອື່ນໆ), ສິນຄ້າ ແລະ ອຸປະກອນຫຼາຍ;
- ☞ ວຽກກໍ່ສ້າງຂະໜາດໃຫຍ່;
- ☞ ບັນດາກິດຈະກໍາ ທີ່ມີຜົນກະທົບທີ່ຮ້າຍແຮງຕໍ່ທຸລະກິດ, ອາຊີບ, ວຽກງານ, ທີ່ຢູ່ອາໄສຂອງຄົນ, ຖິ່ນອາໄສຂອງສັດ ຫຼື ມາດຕະຖານການດໍາລົງຊີວິດ ຂອງປະຊາຊົນບັນດາເຜົ່າ.

## ລະບົບການອະນຸມັດທຶນ

ກປສ ໄດ້ກໍານົດທຶນຊ່ວຍເຫຼືອສອງປະເພດສໍາລັບກອງທຶນຍ່ອຍດັ່ງນີ້:

- ☞ ທຶນຂະໜາດນ້ອຍ (ບໍ່ເກີນ 10.000 ໂດລາ): ເປົ້າໝາຍຂອງທຶນປະເພດນີ້ ແມ່ນແນໃສ່ສະໜັບສະໜູນກິດຈະກໍາຂະໜາດນ້ອຍ ໃນການຄຸ້ມຄອງສານເຄມີທີ່ເປັນອັນຕະລາຍ, ການຄຸ້ມຄອງມົນລະພິດທີ່ເກີດມາຈາກຢາປາບສັດຕູພືດ ແລະ ການຄຸ້ມຄອງສິ່ງເສດເຫຼືອ.
- ☞ ທຶນຂະໜາດໃຫຍ່ (ຫຼາຍກວ່າ 10.000 ໂດລາ): ທຶນປະເພດນີ້ແນໃສ່ສະໜັບສະໜູນກິດຈະກໍາຄືກັນແຕ່ໃຫຍ່ກວ່າ.

http://www.laoepf.org.la

## ການຍື່ນບົດສະເໜີ ແລະ ບ່ອນຂໍຂໍ້ມູນເພີ້ມ

ບົດສະເໜີ ສາມາດຍື່ນໄດ້ທຸກໆວັນເວລາລັດຖະການ ບົດສະເໜີສຸດທ້າຍຢ່າງໜ້ອຍຕ້ອງເຮັດຕາມໜຶ່ງໃນສອງແບບຟອມຄໍາຮ້ອງທີ່ ເປັນມາດຕະຖານຂອງ ກປສ ຊຶ່ງມີດັ່ງນີ້:

- ☞ ຄໍາຮ້ອງຂໍທຶນຂະໜາດນ້ອຍ (ບໍ່ເກີນ 10.000 ໂດລາ)
- ☞ ຄໍາຮ້ອງຂໍທຶນຂະໜາດໃຫຍ່ (ຫຼາຍກວ່າ 10.000 ໂດລາ)

ແບບຟອມຄໍາຮ້ອງດັ່ງກ່າວ ສາມາດຂໍໄດ້ທີ່ໂຄງການ ແລະ ສາມາດເອົາໄດ້ຈາກເວັບໄຊຂອງ ກປສ http://www.laoepf.org.la

ເພື່ອຍື່ນບົດສະເໜີ ຫຼື ຢາກສອບຖາມຂໍ້ມູນເພີ້ມ ສາມາດຕິດຕໍ່ໄດ້ທີ່

**ຫ້ອງການບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ**
ຊັ້ນ 3, ຕຶກ ອວຕສ, ຖະໜົນສີດໍາດວນ
ນະຄອນຫຼວງວຽງຈັນ, ສປປ ລາວ
ຕູ້ ປນ: 7647
ໂທລ: 021 252739
ແຟັກ: 021 252741
http://www.laoepf.org.la

# ກອງທຶນປົກປັກຮັກສາສິ່ງແວດລ້ອມ

### ບົດແນະນໍາ ເພື່ອກະກຽມບົດສະເໜີຂໍທຶນນໍາ ກອງທຶນຍ່ອຍ "ຄວບຄຸມມົນລະພິດ"



## ພາກສະເໜີ

ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ໄດ້ຖືກສ້າງຕັ້ງຂຶ້ນໃນ ປີ 2005 ໃຫ້ເປັນອົງການທີ່ກຸ້ມຕົນເອງທາງດ້ານການເງິນ ແລະ ການບໍລິຫານ, ເພື່ອແນໃສ່ສ້າງຄວາມເຂັ້ມແຂງໃນການປົກປັກຮັກສາສິ່ງແວດລ້ອມ, ການຄຸ້ມຄອງຊັບພະຍາກອນທໍາມະຊາດແບບຍືນຍົງ, ການປົກປັກຮັກສາຊີວະນາງພັນ ແລະ ການພັດທະນາຊຸມຊົນຢູ່ ສປປລາວ.

ກປສ ໄດ້ສ້າງຕັ້ງກອງທຶນຍ່ອຍ ຫຼື ບ້ວງສະໜອງສະເພາະ **"ຄວບຄຸມມົນລະພິດ"** ຂຶ້ນເພື່ອສ້າງຄວາມເຂັ້ມແຂງໃນການຄຸ້ມຄອງສິ່ງແວດລ້ອມ ຢູ່ ສປປລາວ, ແນ່ໃສ່ຮັບປະກັນຄຸນນະພາບຂອງການເຕີບໂຕທາງດ້ານເສດຖະກິດ ແລະ ຫລຸດຜ່ອນຄວາມທຸກຍາກໃຫ້ໄດ້ດີຂຶ້ນ. ຈາກກອງທຶນຍ່ອຍດັ່ງກ່າວ, ກປສ ຈະສະໜອງທຶນໃຫ້ແກ່ກິດຈະການ, ແຜນການ ແລະ ໂຄງການທີ່ເຄື່ອນໄຫວໃນຂົງເຂດດັ່ງນີ້:

- ☞ ການຄຸ້ມຄອງສານເຄມີທີ່ເປັນອັນຕະລາຍ
- ☞ ການຄຸ້ມຄອງມົນລະພິດເກີດມາຈາກຢາປາບສັດຕູພືດ
- ☞ ການຄຸ້ມຄອງສິ່ງເສດເຫລືອ

## ຂອບເຂດຂອງການສະໜອງທຶນ

ທຶນຂະໜາດນ້ອຍ ແລະ ຂະໜາດໃຫຍ່ ຈະໄດ້ກໍ່ຕໍ່ເມື່ອໄດ້ຮັບການພິຈາລະນາ ແລະ ເຫັນດີໂດຍຫ້ອງການກອງທຶນ ແລະ/ຫຼື ຂອງສະພາບໍລິຫານ, ເພື່ອຮັບປະກັນວ່າບົດສະເໜີຂໍທຶນນັ້ນຈະປະກອບສ່ວນໃຫ້ໄດ້ຕາມຈຸດປະສົງຂອງກອງທຶນຍ່ອຍດັ່ງກ່າວ, ຈຶ່ງໄດ້ວາງມາດຕະຖານພື້ນຖານໃນການຄັດເລືອກດັ່ງນີ້:

- ສອດຄ່ອງກັບຍຸດທະສາດລວມແຫ່ງຊາດ;
- ສອດຄ່ອງກັບເປົ້າໝາຍລວມ ຂອງການຄຸ້ມຄອງສິ່ງແວດລ້ອມ ແລະ ການພັດທະນາຊຸມຊົນ;
- ຊອກຮູ້ ແລະ ສັງລວມເອົາ ບັນດາບູລິມາສິດໃນການຄວບຄຸມມົນລະພິດຢູ່ລະດັບທ້ອງຖິ່ນ ແລະ ພາກພື້ນເຂົ້ານຳ;
- ອີງການສະເໜີຂໍທຶນ ຕ້ອງສະແດງໃຫ້ເຫັນຈະແຈ້ງວ່າຈະໃຫ້ເວລາ ແລະ ທຶນຮອນທີ່ເໝາະສົມ ເຂົ້າໃນການຈັດຕັ້ງປະຕິບັດໂຄງການ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດໄດ້ຮັບຜົນສຳເລັດ;
- ລະບຸຜົນສຳເລັດ ແລະ ຜົນໄດ້ຮັບໃຫ້ຈະແຈ້ງ ແລະ ສາມາດປະເມີນຜົນໄດ້;
- ມີການສຶກສາຄວາມເປັນໄປໄດ້ ໃນການບັນລຸຜົນສຳເລັດຈາກທຶນຮອນທີ່ຂໍມາ;
- ຂະໜາດຂອງໂຄງການທີ່ສະເໜີມາ ຕ້ອງຢູ່ບົນພື້ນຖານຄວາມຮັບຮູ້ ແລະ ລວມເອົາບົດຮຽນທີ່ຖອດຖອນໄດ້ມາຈາກວຽກງານຜ່ານມາຢູ່ ສປປລາວ ກໍ່ຄືຢູ່ເຂດອາຊີຕາເວັນອອກສ່ຽງໃຕ້;
- ຂະໜາດຂອງໂຄງການທີ່ສະເໜີມາ ຈະສາມາດເພີ່ມມູນຄ່າໂດຍລະດົມທຶນຮອນເພີ່ມເຕີມຈາກບ່ອນອື່ນໄດ້.






# "ຄວບຄຸມມົນລະພິດ"

# Pollution Control